ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 22 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 23 ພຶດສະພາ 2018

ສໍານັກງານ ຄຄຊ
ເລກທີ 0557
ວັນທີ 25 MAY 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈໍາອາທິດທີ 07-11/05/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,21% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກອັດຕາການຫວ່າງງານ ຂອງເດືອນ 04/2018 ຫຼຸດລົງມາຢູ່ໃນລະດັບ 3,90% ຈາກ 4,10% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 30/04-04/05/2018 | ອາທິດນີ້ 07-11/05/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1959 | 1,1934 | 0,21% |
| ເຢນ/ໂດລາ | 109,10 | 109,30 | -0,18% |
| ບາດ/ໂດລາ | 31,77 | 31,85 | -0,25% |
| ເປໂຊ/ໂດລາ | 51,73 | 52,31 | -1,12% |
| ຣູເປັຍ/ໂດລາ | 13.935,00 | 13.945,00 | -0,07% |
| ໂດລາສິງກະໂປ/ໂດລາ | 1,3341 | 1,3337 | 0,03% |
| ຢວນ/ໂດລາ | 6,3598 | 6,3327 | 0,43% |

#### 1.2 ສະພາບລາຄານໍ້າມັນ ແລະ ຄໍາໃນຕະຫຼາດໂລກ

- ລາຄານໍ້າມັນເພີ່ມຂຶ້ນ 4,63% ຈາກ 68,28 ໂດລາ/ບາເຣວ ມາເປັນ 71,44 ໂດລາ/ບາເຣວ ເນື່ອງຈາກຄັງສໍາຮອງນໍ້າມັນດິບຂອງ ສະຫະລັດອາເມລິກາຫຼຸດລົງ 2,20 ລ້ານບາເຣວ;

- ລາຄາຄຳເພີ່ມຂຶ້ນ 1,20% ຈາກ 1.309,01 ໂດລາ/ອອນ ມາເປັນ 1.324,69 ໂດລາ/ອອນ ເນື່ອງຈາກຄວາມຜັນຜວນຂອງຄ່າເງິນໂດລາ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,31% ແຕ່ແຂງຄ່າຂຶ້ນ 0,55% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,88% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 3,04% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 04/05/2018 | | | ອາທິດນີ້ 11/05/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.347,84 | 8.371,79 | 8.360,75 | 8.372,62 | 8.403,99 | 8.386,37 | -0,30% | -0,38% | -0,31% | -0,85% | -0,92% | -0,88% |
| ບາດ | 264,97 | 266,11 | 265,65 | 263,08 | 264,58 | 264,18 | 0,72% | 0,58% | 0,55% | -3,06% | -2,96% | -3,04% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ຫຼຸດລົງ 1,51% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,28%;
- ປະລິມານເງິນ M2 ຫຼຸດລົງ 1% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,09%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (04-10/05/2018) ເຫັນວ່າ ທທກ ຂາຍໂດລາສຸດທິ 7,51 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 29,46 ລ້ານໂດລາ ແລະ ຂາຍໂດລາໄດ້ 36,97 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 526,55 ລ້ານບາດ (ໃນນີ້ຊື້ບາດໄດ້ 160,29 ລ້ານບາດ ແລະ ຂາຍບາດໄດ້ 686,64 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 12,68% ແຕ່ເງິນບາດ ເພີ່ມຂຶ້ນ 0,96%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 22,70 ລ້ານໂດລາ ແລະ ເງິນບາດ ຈຳນວນ 84,80 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,27 ລ້ານໂດລາ ແລະ ເງິນບາດ ຈຳນວນ 184,53 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 27/04-03/05/2018 | | ອາທິດນີ້ 04-11/05/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **36,78** | **142,46** | **29,46** | **160,29** | **-19,90%** | **12,52%** |
| - ທ/ຄທຸລະກິດລັດ | 10,25 | 44,22 | 10,24 | 47,31 | -0,10% | 6,99% |
| - ທ/ຄທຸລະກິດອື່ນໆ | 26,53 | 98,24 | 19,22 | 112,98 | -27,55% | 15,00% |
| 2. ການຂາຍເງິນຕາຕ່າງປະເທດ | **39,30** | **696,62** | **36,97** | **686,84** | **-5,93%** | **-1,40%** |
| - ທ/ຄທຸລະກິດລັດ | 14,89 | 245,87 | 20,92 | 142,49 | 40,50% | -42,05% |
| - ທ/ຄທຸລະກິດອື່ນໆ | 24,41 | 450,32 | 16,05 | 544,35 | -34,25% | 20,77% |
| ຊື້-ຂາຍສຸດທິ ທທກ | **-2,52** | **-554,16** | **-7,51** | **-526,55** | **198,02%** | **-4,98%** |
| - ຜິດດ່ຽງຊື້-ຂາຍ | -6,85% | -388,99% | -25,49% | -328,50% | 272,12% | -15,55% |
| - ມູນຄ່າການຊື້-ຂາຍ | **76,08** | **839,08** | **66,43** | **847,13** | **-12,68%** | **0,96%** |
| 3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ | **-8,70** | **-43,00** | **-22,70** | **-84,80** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,70 | 43,00 | 22,70 | 84,80 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **3,46** | **109,10** | **3,27** | **184,53** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 05/2018 ຄາດວ່າຈະຢູ່ໃນລະດັບ 2,22% (ຕົວເລກຄາດຄະເນ).

**2,5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 233,7% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 69,11 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 8,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 77,18 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 667 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 63 ສະບັບ ເທົ່າກັບ 10,43% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 284,21 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 47,83 ຕື້ກີບ ເທົ່າກັບ 14,40%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (04-10/05/2018) ມີທັງໝົດ 4,103 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3,992 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 510 ຕື້ກີບ ຈາກ 688,37 ຕື້ກີບ ມາເປັນ 1.198,16 ຕື້ກີບ ເທົ່າກັບ 74,05%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 111 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 220,88 ຕື້ກີບ ຈາກ 6,74 ຕື້ກີບ ມາເປັນ 227,62 ຕື້ກີບ ເທົ່າກັບ 97,03%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 940,78 ຈຸດ ເພີ່ມຂຶ້ນ ຈາກ 906,34 ຈຸດ ຫຼື ເທົ່າກັບ 3,80% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 791.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,07 ຕື້ກີບ ເພີ່ມຂຶ້ນ 191,09% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 57,90% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ BCEL, EDL-Gen ແລະ LCC.

➢ ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | | |
|---|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາປ່ຽນແປງ (ກີບ) | ລາຄາປ່ຽນແປງ (%) |
| **BCEL** | 249.100 | 1.291.490.000 | 5.250 | **629.300** | **3.366.855.000** | **5.400** | 152,63 | 160,70 | 150 | 2,86 |
| **EDL-GEN** | 23.200 | 103.960.000 | 4.400 | **156.000** | **691.920.000** | **4.600** | 572,41 | 565,56 | 200 | 4,55 |
| **LWPC** | - | - | 4.200 | - | - | **4.200** | - | - | - | - |
| **PTL** | - | - | 1.700 | **300** | **510.000** | **1.700** | - | - | - | - |
| **SVN** | - | - | 2.900 | - | - | - | - | - | - | - |
| **PCD** | 1.100 | 1.460.000 | 1.400 | **800** | **1.090.000** | **1.450** | -27,27 | -25,34 | 50 | 3,57 |
| **LCC** | 500 | 1.125.000 | 2.200 | **4.800** | **10.585.000** | **2.200** | 860,00 | 840,89 | - | - |
| ທັງໝົດ | 273.900 | 1.398.035.000 | | **791.200** | **4.070.960.000** | | 188,86 | 191,09 | | |

## 5. ວຽກງານອື່ນໆທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຈັດກອງປະຊຸມຕ່າງໆ: ❶ ກອງປະຊຸມກຳມະການເມືອງ ທີ່ (ຫ້ອງວ່າການສູນກາງພັກ), ❷ ກອງປະຊຸມສ່ອງແສງລາຍງານສາຍພັກ-ສາຍລັດ ປະຈຳເດືອນ 03-04/2018 ທີ່ (ທຫລ), ❸ ກອງປະຊຸມຄະນະຮັບຜິດຊອບວຽກງານ ການພັດທະນາແບບຍືນຍົງ ຂອງຂະແໜງການທະນາຄານ ທີ່ (ທຫລ), ❹ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບກະກຽມເນື້ອໃນສະເຫຼີມສະຫຼອງວັນສ້າງຕັ້ງ ທຫລ ຄົບຮອບ 50 ປີ ທີ່ (ທຫລ), ❺ ກອງປະຊຸມປຶກສາຫາລືກ່ຽວກັບໂຄງສ້າງລາຄານ້ຳມັນເຊື້ອໄຟ ທີ່ (ກະຊວງການເງິນ) ແລະ ❻ ກອງປະຊຸມສຳມະນາການເປີດເສລີທາງດ້ານການເງິນ-ການທະນາຄານ ພາຍໃຕ້ກອບຂອງອົງການການຄ້າໂລກ ທີ່ (ໂຮງແຮມລາວພລາຊາ);
- ສຳເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຄະນະປະເມີນເສດຖະກິດມະຫາພາກ ສປປ ລາວ ລາວ ຂອງກອງທຶນການເງິນສາກົນ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;

- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;

- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມນາຍົກ-ຮອງນາຍົກ ປະຈໍາເດືອນພຶດສະພາ 2018 ທີ່ (ຫສນຍ), ❷ ກອງປະຊຸມຮ່ວມກັບກະຊວງແຜນການ ແລະ ການລົງທຶນ ແລະ ຄະນະຊ່ຽວຊານກ່ຽວກັບການສ້າງລະບຽບການໃນການຄຸ້ມຄອງ ແລະ ກໍານົດອັດຕາອາກອນສໍາລັບກິດຈະການຄາຊີໂນທົ່ວປະເທດ ທີ່ (ທຫລ), ❸ ກອງປະຊຸມສະຫຼຸບການຄຸ້ມຄອງວຽກງານບໍລິສັດເຊົ່າສິນເຊື່ອ ປະຈໍາປີ 2017 ທີ່ (ສູນ ICTC) ແລະ ❹ ກອງປະຊຸມສະຫຼຸບວຽກງານໂຮງຊວດຈໍາ ປະຈໍາປີ 2018 ທີ່ (ສູນ ICTC);

- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຄະນະປະເມີນເສດຖະກິດມະຫາພາກ ສປປ ລາວ ຂອງກອງທຶນການເງິນສາກົນ ແລະ ເຂົ້າຮ່ວມຕິດຕາມ ທ່ານຮອງນາຍົກ ເພື່ອຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະດັ່ງກ່າວ.

ຫົວໜ້າຫ້ອງການ




ເພັດສະຖາພອນ ແກ້ວວົງວິຈິດ